# ໜັງສື ຟີເລໂມນ

ໃຈຄວາມສຳຄັນ    ຖືກປ່ຽນໃຈດ້ວຍ ຍັງພຣະຄຣິດ

ຈຳນວນບົດ:    ໑ ບົດ

ວ່າດ້ວຍເວລາແລະໂອກາດທີ່ຂຽນ:

ທ່ານໂປໂລໄດ້ຂຽນຈົດໝາຍນີ້ ເມື່ອເວລາເພິ່ນຖືກຄຸກຢູ່ກຸງໂຣມໃນຄັ້ງແຣກ ຄືໄດ້ຂຽນເມື່ອປີ ຄ.ສ. ໖໒ ຈຶ່ງເປັນປີດຽວກັນກັບທີ່ໄດ້ຂຽນໜັງສືເອເຟດ

ເມື່ອເພິ່ນຄ້າງຢູ່ໃນຄຸກນັ້ນ ເພິ່ນໄດ້ພົບກັບໂອເນຊິມຜູ້ເປັນທາດຂອງທ່ານຟີເລໂມນ ຊຶ່ງຖືກຄຸກຢູ່ ເພາະໂທດລັກຂອງ ໆ ທ່ານຟີເລໂມນ (ຂໍ້ ໑໘) ແຕ່ເມື່ອລາວໄດ້ພົບກັບທ່ານໂປໂລ ລາວກໍປະໃຈເກົ່າເອົາໃຈໃໝ່ (ຂໍ້ ໑໐) ແລະໄດ້ເປັນຜູ້ປະຕິບັດລັບໃຊ້ທ່ານໂປໂລ (ຂໍ້ ໑໑, ໑໓) ເຖິງແມ່ນວ່າທ່ານໂປໂລຕ້ອງການຢາກໃຫ້ໂອເນຊິມໄດ້ຢູ່ກັບເພິ່ນກໍຕາມ ເພິ່ນກໍຍັງຕົກລົງໃຈສົ່ງໂອເນຊິມຄືນໄປຫາທ່ານຟີເລໂມນອີກ ເພື່ອໃຫ້ລາວໄດ້ຄືນດີກັບນາຍເກົ່າຂອງລາວ ສະນັ້ນເພິ່ນຈຶ່ງໄດ້ຂຽນຈົດໝາຍສະບັບນີ້ໄປຍັງທ່ານຟີເລໂມນ (ຂໍ້ ໑໑–໑໓) ທີ່ເມືອງໂກໂລດ (ໂກໂລດ ໔:໗–໙)

ວ່າດ້ວຍຜູ້ຮັບ:

ຜູ້ຮັບຈົດໝາຍນີ້ຄືທ່ານຟີເລໂມນກັບຄອບຄົວຂອງເພິ່ນ ຄືນາງອັບເຟຍຜູ້ເປັນພັຣຍາແລະອາຣະຄິບຜູ້ເປັນລູກຊາຍ

## ວ່າດ້ວຍຄວາມມຸ່ງໝາຍ:

ຄວາມມຸ່ງໝາຍຂອງທ່ານໂປໂລໃນການຂຽນຈົດໝາຍນີ້ ແມ່ນຢາກໃຫ້ທ່ານຟີເລໂມນອະໄພໂທດໃຫ້ທ່ານໂອເນຊິມ ແລະໃຫ້ຮັບເອົາລາວໄວ້ອີກຕາມເຄີຍ ແຕ່ບໍ່ແມ່ນຮັບໄວ້ເປັນທາດຕາມເຄີຍໃຫ້ຮັບໄວ້ໃນຖານະເປັນພີ່ນ້ອງທີ່ຮັກໃນພຣະເຢຊູ (ຂໍ້ ໑໖) ເຖິງແມ່ນວ່າທ່ານໂປໂລມີອຳນາດທີ່ຈະສັ່ງຫລືບອກທ່ານຟີເລໂມນ ແຕ່ເພິ່ນກໍບໍ່ໃຊ້ສິດນັ້ນ ຄືເພິ່ນ ໄດ້ ຂໍຮ້ອງ ໃຫ້ທ່ານ ຟີເລໂມນ ຮັບເອົາລາວ ໄວ້ດ້ວຍຄຳ ສຸພາບ ອ່ອນຫວານ ພ້ອມກັບບອກວ່າ ສິ່ງໃດທີ່ ໂອເນຊິມເອົາໄປນັ້ນ ຂໍໃຫ້ຈົດຫລືຄິດບັນຊີໄວ້ ແລ້ວເພິ່ນຈະໃຊ້ໃຫ້ຕາມທີຫລັງ (ຂໍ້ ໘–໑໐; ໑໗–໒໑)

## ວ່າດ້ວຍເນື້ອຄວາມ:

ຈົດໝາຍນີ້ໄດ້ສະແດງນິໄສແລະນ້ຳໃຈຂອງຄົນ ຄືເມື່ອກ່ອນນັ້ນທ່ານໂປໂລກໍເປັນຄົນໃຈແຂງ ໃຈຮ້າຍ ແຕ່ບັດນີ້ຈະເຫັນໄດ້ວ່າ ເພິ່ນເປັນຄົນສຸພາບອ່ອນຫວານ ແລະມີຈິດໃຈຮັກແພງ ສ່ວນໂອເນຊິມກໍເໝືອນກັນ ຄືຄຳວ່າໂອເນຊິມຊຶ່ງແປວ່າ “ເປັນປະໂຍດ” ກໍບໍ່ເປັນປະໂຍດເລີຍ ເພາະວ່າລາວເປັນຄົນບໍ່ສັດຊື່ ແຕ່ບັດນີ້ລາວຍິນດີທີ່ຈະກັບຄືນໄປຫານາຍເກົ່າຂອງລາວ ເພື່ອຂໍອະໄພແລະທຳປະໂຍດໃຫ້ເພິ່ນ. ອັນນຶ່ງກ່ອນທ່ານໂປໂລຈະຂໍຫຍັງຈາກທ່ານຟີເລໂມນ ເພິ່ນກໍຂອບພຣະຄຸນພຣະເຈົ້າເສັຍກ່ອນ (ຂໍ້ ໔) ພ້ອມທັງສະແດງຄວາມຍິນດີແລະຄວາມສຸກໃຈ ໃນຄວາມເຊື່ອແລະຄວາມຮັກຂອງທ່ານຟີເລໂມນດ້ວຍ (ຂໍ້ ໗)